สาທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ເລກທີ 2359/ຜ-ຟຟລ

ນະຄອນຫຼວງວຽງຈັນ, ວັນທີ 22 ສິງຫາ 2022

# ໃບລາຍງານ

ຮຽນ: ທ່ານ ຫົວໜ້າສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ

ຜູ້ອໍານວຍການໃຫຍ່ ບໍລິສັດ ຕະຫຼາດຫຼັກຊັບລາວ ຈໍາກັດ ທີ່ນັບຖື,

ເລື່ອງ: ແຈ້ງມະຕິທີ່ສໍາຄັນຂອງກອງປະຊຸມສະພາບໍລິຫານສະໄໝສາມັນ ຄັ້ງທີ 3/2022.

- ອີງຕາມຂໍ້ຕົກລົງຂອງຄະນະກໍາມະການຄຸ້ມຄອງຫຼັກຊັບ ວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນຂອງບໍລິສັດອອກຈໍາໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ (ສະບັບປັບປຸງ) ສະບັບເລກທີ 27/ຄຄຊ, ລົງວັນທີ 29 ມີນາ 2022.
- ອີງຕາມລະບຽບຂອງຕະຫຼາດຫຼັກຊັບລາວ ວ່າດ້ວຍການເປີດເຜີຍຂໍ້ມູນ ເລກທີ 330/ຕລຊລ, ລົງວັນທີ 27 ກັນຍາ 2018.

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ("ບໍລິສັດ") ຂໍຖືເປັນກຽດແຈ້ງມະຕິທີ່ສໍາຄັນ ຂອງກອງປະຊຸມສະພາບໍລິຫານສະໄໝສາມັນ ຄັ້ງທີ 3/2022 ວັນທີ 19 ສິງຫາ 2022, ດັ່ງມີລາຍລະອຽດລຸ່ມນີ້:

1. ອະນຸມັດບົດລາຍງານການດໍາເນີນທຸລະກິດ ລວມທັງລາຍງານການເງິນ ຂອງບໍລິສັດ 06 ເດືອນຕົ້ນປີ 2022, ແລະ ໃຫ້ນໍາເລື່ອງນີ້ລາຍງານຕໍ່ກອງປະຊຸມຜູ້ຖືຮຸ້ນ ເພື່ອພິຈາລະນາອະນຸມັດ.
2. ອະນຸມັດບໍ່ຈ່າຍເງິນປັນຜົນຈາກຜົນການດໍາເນີນທຸລະກິດ ຂອງ ບໍລິສັດ 06 ເດືອນຕົ້ນປີ 2022, ເນື່ອງຈາກວ່າບໍລິສັດບໍ່ມີກໍາໄລໃນຊ່ວງການດໍາເນີນທຸລະກິດດັ່ງກ່າວ. ບໍລິສັດຈະນໍາໄປສະເໜີພິຈາລະນາການຈ່າຍເງິນປັນຜົນ ປະຈໍາປີ 2022 ໃນກອງປະຊຸມຜູ້ຖືຮຸ້ນ ຂອງບໍລິສັດ.

ດັ່ງນັ້ນ, ຈຶ່ງຮຽນມາຍັງທ່ານເພື່ອຊາບ ແລະ ໃຊ້ຕາງລາຍງານ.

ດ້ວຍຄວາມນັບຖືເປັນຢ່າງສູງ,

**ກໍາມະການສະພາບໍລິຫານ/ຜູ້ອໍານວຍການໃຫຍ່**

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ EDL-Generation Public Company ນະຄອນຫຼວງວຽງຈັນ

ວັນແສງ ວັນນະວົງ
ຮັກສາການ ຜູ້ອໍານວຍການໃຫຍ່

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ,ເມືອງສີສັດຕະນາກ,ນະຄອນຫຼວງວຽງຈັນ, ສປປລາວ. ຕູ້ປ. ນ. 2392
ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມວ: edlgenhq@edlgen.com.la,ເວັບໄຊທ໌:www.edlgen.com.la